ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ 0766

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ......................................./ກສ

ນະຄອນຫຼວງວຽງຈັນ, ວັນທີ 22 AUG 2025

# ຂໍ້ຕົກລົງ

## ວ່າດ້ວຍ ການຄຸ້ມຄອງວັງສະຫງວນ

- ອີງຕາມ ກົດໝາຍ ວ່າດ້ວຍສັດນ້ຳ ແລະ ການປະມົງ (ສະບັບປັບປຸງ) ສະບັບເລກທີ 41/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ໜັງສືສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 2306/ກລປ, ລົງວັນທີ 09 ມິຖຸນາ 2025;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 0686/ຫກ, ລົງວັນທີ 04 ສິງຫາ 2025.

## ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບ ການຈັດຕັ້ງປະຕິບັດ ວຽກງານວັງສະຫງວນ ໃຫ້ມີຄຸນນະພາບ, ປະສິດທິພາບ ແລະ ປະສິດທິຜົນ ເພື່ອປົກປັກຮັກສາ ແລະ ຄຸ້ມຄອງ ແຫຼ່ງນ້ຳໃຫ້ເປັນທີ່ຢູ່ອາໄສຂອງສັດນ້ຳ, ຮັກສາຄວາມສົມດູນ ຂອງລະບົບນິເວດ ແລະ ຊີວະນາໆພັນ ພ້ອມທັງໃຫ້ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການຄຸ້ມຄອງວັງສະຫງວນ**

ການຄຸ້ມຄອງວັງສະຫງວນ ແມ່ນຂະບວນການວາງແຜນ, ການຈັດຕັ້ງປະຕິບັດ ວຽກງານຕິດຕາມ, ກວດກາ ແລະ ປະເມີນຜົນ ການປົກປັກຮັກສາ ແຫຼ່ງທີ່ຢູ່ອາໄສ, ແຫຼ່ງວາງໄຂ່, ແຫຼ່ງແຜ່ພັນຂອງສັດນ້ຳ ລວມທັງລະບົບນິເວດວິທະຍາ ແລະ ຊີວະນາໆພັນ ໃນເຂດວັງສະຫງວນ ໂດຍການມີສ່ວນຮ່ວມຂອງຊຸມຊົນໃນພື້ນທີ່ແຫຼ່ງນ້ຳດັ່ງກ່າວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ວັງສະຫງວນ** ໝາຍເຖິງ ແຫຼ່ງນ້ຳໃດໜຶ່ງ ທີ່ກຳນົດຂຶ້ນຢູ່ຕາມ ແມ່ນ້ຳ, ອ່າງເກັບນ້ຳ, ອ່າງຮັບນ້ຳ ທີ່ມີນ້ຳຕະຫຼອດປີ ເພື່ອເປັນແຫຼ່ງທີ່ຢູ່ອາໄສ ແລະ ແຜ່ພັນຢ່າງປອດໄພຂອງສັດນ້ຳ;
2. **ລະບົບນິເວດ** ໝາຍເຖິງ ສາຍພົວພັນ ລະຫວ່າງ ສິ່ງທີ່ມີຊີວິດ ແລະ ສິ່ງທີ່ບໍ່ມີຊີວິດ ທີ່ຄົງຕົວຢູ່ຕາມ

ທຳມະຊາດ;

**3. ຊີວະນາໆພັນ** ໝາຍເຖິງ ຄວາມຫຼາກຫຼາຍຂອງລະບົບນິເວດ, ຊະນິດ ແລະ ແນວພັນ ຂອງສິ່ງທີ່ມີຊີວິດ ເຊັ່ນ ພືດ, ສັດ, ແມງໄມ້ ແລະ ຈຸລິນຊີ ຢູ່ໃນຂອບເຂດທຳມະຊາດໃດໜຶ່ງ;

**4. ແຫຼ່ງທີ່ຢູ່ອາໄສ ຂອງສັດນ້ຳ** ໝາຍເຖິງ ແຫຼ່ງນ້ຳທຳມະຊາດ ຫຼື ສ້າງຂຶ້ນ ທີ່ເປັນບ່ອນດຳລົງຊີວິດ ແລະ ຂະຫຍາຍພັນ ຂອງສັດນ້ຳ.

**ມາດຕາ 4 ຫຼັກການ ກ່ຽວກັບ ວຽກງານຄຸ້ມຄອງວັງສະຫງວນ**

ວຽກງານຄຸ້ມຄອງວັງສະຫງວນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ນະໂຍບາຍ, ກົດໝາຍ, ຍຸດທະສາດ, ແຜນພັດທະນາ ແລະ ລະບຽບການ ທີ່ກ່ຽວຂ້ອງກັບ ວຽກງານສັດນ້ຳ ແລະ ການປະມົງ;

2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

3. ຮັບປະກັນການມີສ່ວນຮ່ວມ ຂອງພາກລັດ, ເອກະຊົນ ແລະ ປະຊາຊົນບັນດາເຜົ່າ ໃນການຄຸ້ມຄອງ ວັງສະຫງວນ;

4. ຕິດພັນກັບການປູກຈິດສຳນຶກ ໃນການປົກປັກຮັກສາ, ການທ່ອງທ່ຽວແບບອະນຸລັກ ແລະ ຍືນຍົງ;

5. ປະຕິບັດ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວ ກ່ຽວກັບ ການສ້າງ, ຄຸ້ມຄອງ ແລະ ນຳໃຊ້ວັງສະຫງວນ ຢູ່ ສປປ ລາວ.

## ໝວດທີ 2
## ການສ້າງຕັ້ງ ແລະ ຄຸ້ມຄອງວັງສະຫງວນ

**ມາດຕາ 6 ປະເພດຂອງວັງສະຫງວນ**

ວັງສະຫງວນມີ ສອງ ປະເພດ ຄື: ວັງສະຫງວນຫວງຫ້າມ ແລະ ວັງສະຫງວນຕາມລະດູການ.

1. ວັງສະຫງວນຫວງຫ້າມ ແມ່ນ ວັງສະຫງວນ ທີ່ບໍ່ອະນຸຍາດໃຫ້ຫາສັດນ້ຳຕະຫຼອດປີ;

2. ວັງສະຫງວນຕາມລະດູການ ແມ່ນ ວັງສະຫງວນ ທີ່ອະນຸຍາດໃຫ້ ຫາ ຫຼື ຈັບ ສັດນ້ຳ ໄດ້ໃນໄລຍະເວລາໃດໜຶ່ງ ຕາມການກຳນົດ ຂອງອົງການຄຸ້ມຄອງວຽກງານສັດນ້ຳ ແລະ ການປະມົງ.

ສຳລັບ ເງື່ອນໄຂຂອງການກຳນົດປະເພດວັງສະຫງວນ ໃຫ້ ຄະນະກຳມະການຄຸ້ມຄອງວັງສະຫງວນເປັນຜູ້ກຳນົດ.

**ມາດຕາ 7 ການສະເໜີສຳຫຼວດ ແລະ ກຳນົດເຂດແຫຼ່ງນ້ຳ ເພື່ອສ້າງວັງສະຫງວນ**

ການສຳຫຼວດ ແລະ ກຳນົດເຂດແຫຼ່ງນ້ຳ ເພື່ອສ້າງວັງສະຫງວນ ໃຫ້ປະຕິບັດ ດັ່ງນີ້:

1. ບ້ານໜຶ່ງ ຫຼື ຫຼາຍບ້ານ ທີ່ມີຈຸດປະສົງຈະສ້າງວັງສະຫງວນ ໃຫ້ຍື່ນໜັງສືສະເໜີ ຂໍສ້າງຕັ້ງວັງສະຫງວນ ຫາ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ພ້ອມທັງຄັດຕິດ ບົດບັນທຶກກອງປະຊຸມ ແລະ ບົດລາຍງານການສຳຫຼວດພື້ນທີ່ທີ່ຈະສ້າງວັງສະຫງວນ ຂອງບ້ານ;

2. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ພາຍຫຼັງໄດ້ຮັບໜັງສືສະເໜີ ຂໍສ້າງຕັ້ງວັງສະຫງວນຂອງບ້ານແລ້ວ, ໃຫ້ພິຈາລະນາ ແຕ່ງຕັ້ງຄະນະ ລົງສຳຫຼວດ ແລະ ກຳນົດເຂດວັງສະຫງວນ ພ້ອມທັງລາຍງານ ແລະ ສະເໜີຕໍ່ ຄະນະກຳມະການປົກຄອງຂັ້ນເມືອງ ເພື່ອແຕ່ງຕັ້ງ ຄະນະວິຊາການສຳຫຼວດ ແລະ ກຳນົດວັງສະຫງວນຂັ້ນເມືອງ ຊຶ່ງປະກອບດ້ວຍ ຂະແໜງການທີ່ກ່ຽວຂ້ອງ ເພື່ອລົງສຳຫຼວດ ແລະ ກຳນົດເຂດວັງສະຫງວນ;



h

3. ພາຍຫຼັງ ຄະນະວິຊາການສຳຫຼວດ ແລະ ກຳນົດວັງສະຫງວນ ຂັ້ນເມືອງ ລົງສຳຫຼວດ ແລະ ກຳນົດເຂດວັງສະຫງວນ ແລ້ວ, ໃຫ້ລາຍງານຜົນການສຳຫຼວດ ແລະ ກຳນົດເຂດວັງສະຫງວນ ເພື່ອສະເໜີໃຫ້ ຄະນະກຳມະການປົກຄອງຂັ້ນເມືອງ ເປັນຜູ້ພິຈາລະນາອະນຸມັດ ສ້າງຕັ້ງວັງສະຫງວນ ຢ່າງເປັນທາງການ ຕາມແບບພິມ ທີ່ກົມລ້ຽງສັດ ແລະ ການປະມົງ ກຳນົດ ພ້ອມທັງ ແຕ່ງຕັ້ງ ຄະນະກຳມະການຄຸ້ມຄອງວັງສະຫງວນ.

**ມາດຕາ 8 ຄະນະກຳມະການຄຸ້ມຄອງວັງສະຫງວນ**

ຄະນະກຳມະການຄຸ້ມຄອງວັງສະຫງວນ ແມ່ນ ການຈັດຕັ້ງ ທີ່ຄະນະກຳມະການປົກຄອງຂັ້ນເມືອງ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ. ຄະນະກຳມະການຄຸ້ມຄອງວັງສະຫງວນບ້ານໜຶ່ງ ປະກອບມີ ດັ່ງນີ້:

**ກ. ຄະນະຊີ້ນຳລວມ ປະກອບມີ:**

| | |
|---|---|
| 1. ນາຍບ້ານ | ເປັນປະທານ; |
| 2. ແນວໂຮມບ້ານ | ເປັນຮອງ. |

**ຂ. ຄະນະໄກ່ເກ່ຍ ປະກອບມີ:**

| | |
|---|---|
| 1. ແນວໂຮມບ້ານ | ເປັນຫົວໜ້າ; |
| 2. ຄະນະບ້ານ | ເປັນຮອງ; |
| 3. ສະຫະພັນນັກຮົບເກົ່າ | ເປັນກຳມະການ; |
| 4. ສະຫະພັນແມ່ຍິງ | ເປັນກຳມະການ; |
| 5. ປກສ ບ້ານ | ເປັນກຳມະການ; |
| 6. ປກຊ ບ້ານ | ເປັນກຳມະການ. |

**ຄ. ຄະນະກຳມະການກວດກາລາດຕະເວນ ວັງສະຫງວນ ປະກອບມີ:**

1. ປກສ ບ້ານ;
2. ປກຊ ບ້ານ;
3. ຊາວໜຸ່ມບ້ານ;
4. ຫົວໜ້າໜ່ວຍແຕ່ລະໜ່ວຍ.

ສຳລັບ ຄະນະກຳມະການຄຸ້ມຄອງວັງສະຫງວນ ທີ່ມີຫຼາຍບ້ານ ປະກອບມີ ດັ່ງນີ້:

**ກ. ຄະນະຊີ້ນຳລວມ ປະກອບມີ:**

| | |
|---|---|
| 1. ນາຍບ້ານຂອງບ້ານໃດບ້ານໜຶ່ງ ຕາມການຕົກລົງກັນ | ເປັນປະທານ; |
| 2. ນາຍບ້ານ ຫຼື ຄະນະບ້ານ ຕາງໜ້າແຕ່ລະບ້ານ | ເປັນຮອງ; |
| 3. ແນວໂຮມ ຕາງໜ້າແຕ່ລະບ້ານ | ເປັນກຳມະການ. |

**ຂ. ຄະນະໄກ່ເກ່ຍ ປະກອບມີ:**

| | |
|---|---|
| 1. ແນວໂຮມ ບ້ານໃດບ້ານໜຶ່ງ ຕາມການຕົກລົງກັນ | ເປັນຫົວໜ້າ; |
| 2. ຕາງໜ້າ ແນວໂຮມ ແຕ່ລະບ້ານ | ເປັນຮອງ; |
| 3. ຕາງໜ້າ ສະຫະພັນນັກຮົບເກົ່າ | ເປັນກຳມະການ; |
| 4. ຕາງໜ້າ ສະຫະພັນແມ່ຍິງ ແຕ່ລະບ້ານ | ເປັນກຳມະການ; |
| 5. ຕາງໜ້າ ປກສ ແຕ່ລະບ້ານ | ເປັນກຳມະການ; |
| 6. ຕາງໜ້າ ປກຊ ແຕ່ລະບ້ານ | ເປັນກຳມະການ. |

**ຄ. ຄະນະກຳມະການກວດກາລາດຕະເວນ ວັງສະຫງວນ ປະກອບມີ:**

1. ຕາງໜ້າ ປກສ ແຕ່ລະບ້ານ;
2. ຕາງໜ້າ ປກຊ ແຕ່ລະບ້ານ;

3. ຕາງໜ້າ ຊາວໜຸ່ມ ແຕ່ລະບ້ານ;

4. ຕາງໜ້າ ຫົວໜ້າໜ່ວຍ ແຕ່ລະບ້ານ.

**ມາດຕາ 9 ສິດ ແລະ ໜ້າທີ່ ຂອງຄະນະກຳມະການຄຸ້ມຄອງວັງສະຫງວນ**

ຄະນະກຳມະການຄຸ້ມຄອງວັງສະຫງວນ ປະກອບດ້ວຍ ຄະນະຊີ້ນຳລວມ, ຄະນະໄກ່ເກ່ຍ ແລະ ຄະນະກຳມະການກວດກາລາດຕະເວນ ວັງສະຫງວນ ຊຶ່ງມີສິດ ແລະ ໜ້າທີ່ ດັ່ງນີ້:

**ກ. ສິດ ແລະ ໜ້າທີ່ຂອງ ຄະນະຊີ້ນຳລວມ ມີດັ່ງນີ້:**

1. ຊີ້ນຳ ນຳພາລວມ ທຸກຂົງເຂດວຽກງານ ການຄຸ້ມຄອງ ແລະ ນຳໃຊ້ວັງສະຫງວນ;

2. ສ້າງແຜນການຄຸ້ມຄອງ ແລະ ພັດທະນາວັງສະຫງວນ ເຊັ່ນ: ກຳນົດເຂດພື້ນທີ່, ເຂດຫວງຫ້າມ, ການປ່ອຍ, ການຫາ ສັດນ້ຳ ແລະ ອື່ນໆ;

3. ສ້າງລະບຽບການຄຸ້ມຄອງວັງສະຫງວນ ເປັນຕົ້ນ: ການນຳໃຊ້ເຄື່ອງມືຈັບສັດນ້ຳ, ລະດູການ, ຊະນິດສັດນ້ຳ ທີ່ບໍ່ອະນຸຍາດໃຫ້ ຫາ ຫຼື ຈັບ ເພື່ອສະເໜີຕໍ່ ຄະນະກຳມະການປົກຄອງ ຂັ້ນເມືອງ ພິຈາລະນາຮັບຮອງ ແລະ ປະກາດໃຊ້;

4. ເຜີຍແຜ່, ຕິດປະກາດ, ອອກຂ່າວທາງສື່ມວນຊົນ ກ່ຽວກັບ ແຜນການ ແລະ ລະບຽບການຄຸ້ມຄອງວັງສະຫງວນ;

5. ປົກປ້ອງ ສິດ ແລະ ຜົນປະໂຫຍດ ທີ່ເກີດຈາກ ການນຳໃຊ້ວັງສະຫງວນ ລວມທັງ ການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ ໃນພື້ນທີ່ວັງສະຫງວນຂອງຕົນ;

6. ຊຸກຍູ້, ຊີ້ນຳ, ຕິດຕາມ ແລະ ກວດກາ ການປະຕິບັດລະບຽບ ການຄຸ້ມຄອງວັງສະຫງວນ;

7. ຊອກຫາແຫຼ່ງທຶນ ເຂົ້າໃນ ວຽກງານຄຸ້ມຄອງ ແລະ ພັດທະນາວັງສະຫງວນ;

8. ເກັບກຳຂໍ້ມູນສະຖິຕິ ກ່ຽວກັບ ຜົນຜະລິດ ແລະ ລາຍຮັບ ທີ່ໄດ້ຈາກວັງສະຫງວນ ແລ້ວສະຫຼຸບລາຍງານໃຫ້ ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ຊາບ.

**ຂ. ສິດ ແລະ ໜ້າທີ່ຂອງ ຄະນະໄກ່ເກ່ຍ ມີດັ່ງນີ້:**

1. ສືບສວນ-ສອບສວນ ແລະ ໄກ່ເກ່ຍຄະດີ ຂອງຜູ້ກະທຳຜິດ ຕາມລະບຽບການ ທີ່ກຳນົດ;

2. ລາຍງານຜົນການໄກ່ເກ່ຍ ໃຫ້ ຄະນະຊີ້ນຳລວມ ຊາບ;

3. ສຶກສາອົບຮົມປະຊາຊົນ ພາຍໃນບ້ານ ໃຫ້ເຂົ້າຮ່ວມຈັດຕັ້ງປະຕິບັດລະບຽບຄຸ້ມຄອງວັງສະຫງວນ.

**ຄ. ສິດ ແລະ ໜ້າທີ່ ຂອງຄະນະກຳມະການກວດກາລາດຕະເວນ ວັງສະຫງວນ ມີດັ່ງນີ້:**

1. ກວດກາ, ປ້ອງກັນ ແລະ ເວນຍາມວັງສະຫງວນ;

2. ຈັດຕັ້ງປະຊາຊົນພາຍໃນບ້ານ ແຕ່ລະໜ່ວຍ ເຂົ້າຮ່ວມໃນການເວນຍາມວັງສະຫງວນ ໂດຍມີການສ້າງຕາຕະລາງເວນຍາມ ໃສ່ປຶ້ມບັນທຶກໃນແຕ່ລະຄັ້ງ ຢ່າງລະອຽດ;

3. ກັກຕົວຜູ້ກະທຳຜິດ, ຍຶດເຄື່ອງມືຫາສັດນ້ຳ ໄວ້ເປັນຂອງກາງ ແລ້ວລາຍງານໃຫ້ຄະນະຊີ້ນຳລວມ ຮັບຊາບ ໃຫ້ທັນເວລາ.

**ມາດຕາ 10 ການກວດກາລາດຕະເວນວັງສະຫງວນ**

ການກວດກາລາດຕະເວນວັງສະຫງວນ ແມ່ນການດຳເນີນການກວດກາຄວາມເປັນລະບຽບຮຽບຮ້ອຍ ຂອງວັງສະຫງວນ ຢ່າງເປັນປົກກະຕິ ເພື່ອຮັບປະກັນ ບໍ່ໃຫ້ມີຜູ້ລະເມີດ ເຂົ້າໄປບຸກລຸກ ແລະ ຫາສັດນ້ຳ ໃນຂອບເຂດວັງສະຫງວນ, ໂດຍແຕ່ງຕັ້ງເປັນຄະນະທີ່ຊັດເຈນ, ຜັດປ່ຽນກັນລົງກວດກາລາດຕະເວນ ຢ່າງເປັນປົກກະຕິ, ມີການບັນທຶກ ແລະ ລາຍງານທຸກໆຄັ້ງ ພ້ອມທັງມີ ການປະຊຸມເພື່ອຖອດຖອນບົດຮຽນ ແລະ ວາງແຜນການກວດກາລາດຕະເວນ ຄັ້ງຕໍ່ໄປ.

ໃນກໍລະນີ ທີ່ມີການລາຍງານວ່າ ມີຜູ້ລະເມີດ ຫາ ຫຼື ຈັບ ສັດນ້ຳ ຢູ່ວັງສະຫງວນ ຄະນະກວດກາລາດຕະເວນ

ຕ້ອງການປະສານກັນຢ່າງຮີບດ່ວນ ພ້ອມທັງລົງໄປສະກັດກັ້ນ ແລະ ກ່າວເຕືອນ. ຖ້າຫາກຜູ້ກະທຳຜິດມີການລະເມີດເປັນຄັ້ງທີ ສອງ ແລະ ຄັ້ງທີ ສາມ ຄະນະກວດກາລາດຕະເວນ ຕ້ອງປັບໃໝ ຕາມລະບຽບການ ທີ່ກຳນົດໄວ້.

### ມາດຕາ 11 ການຂະຫຍາຍວັງສະຫງວນ

ຄະນະກຳມະການຄຸ້ມຄອງວັງສະຫງວນ ທີ່ມີຈຸດປະສົງຈະຂະຫຍາຍວັງສະຫງວນ ຕ້ອງສຳຫຼວດ ແລະ ກຳນົດເຂດວັງສະຫງວນ ພ້ອມທັງລາຍງານ ໃຫ້ຄະນະກຳມະການປົກຄອງຂັ້ນເມືອງ ເພື່ອພິຈາລະນາອະນຸມັດຂະຫຍາຍວັງສະຫງວນ ຢ່າງເປັນທາງການ.

### ມາດຕາ 12 ການຍົກເລີກວັງສະຫງວນ

ວັງສະຫງວນ ຈະຖືກຍົກເລີກໂດຍຄະນະກຳມະການປົກຄອງຂັ້ນເມືອງ ຕາມການສະເໜີຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ໃນກໍລະນີ ດັ່ງນີ້:

1. ມີການສະເໜີ ຂອງຄະນະກຳມະການຄຸ້ມຄອງວັງສະຫງວນ ທີ່ສົມເຫດສົມຜົນ;
2. ໄດ້ມີການປະເມີນຈາກ ຄະນະກຳມະການຄຸ້ມຄອງວັງສະຫງວນ ເຫັນວ່າວັງສະຫງວນດັ່ງກ່າວບໍ່ເກີດຜົນປະໂຫຍດໃດໆຕໍ່ຊຸມຊົນ ແລະ ການຈັດຕັ້ງ;
3. ວັງສະຫງວນຖືກພັດທະນາໄປໃນຈຸດປະສົງອື່ນ ຕາມແຜນພັດທະນາ ຂອງການຈັດຕັ້ງລັດ.

## ໝວດທີ 3
## ການນຳໃຊ້ວັງສະຫງວນ

### ມາດຕາ 13 ການປ່ອຍສັດນ້ຳລົງວັງສະຫງວນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດປ່ອຍສັດນ້ຳ ລົງສູ່ວັງສະຫງວນໄດ້ ແຕ່ແນວພັນທີ່ຈະນຳມາປ່ອຍຕ້ອງແມ່ນຊະນິດພັນສັດນ້ຳທ້ອງຖິ່ນ, ບໍ່ເປັນອັນຕະລາຍຕໍ່ສັດນ້ຳອື່ນ ແລະ ລະບົບນິເວດ ໂດຍໄດ້ຮັບອະນຸຍາດຈາກ ຄະນະກຳມະການຄຸ້ມຄອງວັງສະຫງວນ.

### ມາດຕາ 14 ການທ່ອງທ່ຽວວັງສະຫງວນ

ຄະນະກຳມະການຄຸ້ມຄອງວັງສະຫງວນ ຕ້ອງພັດທະນາ ແລະ ສົ່ງເສີມກິດຈະການຕ່າງໆໃນພື້ນທີ່ວັງສະຫງວນ ໃຫ້ຕິດພັນກັບການທ່ອງທ່ຽວ ເພື່ອສ້າງລາຍຮັບແກ່ປະຊາຊົນໃນທ້ອງຖິ່ນ ແລະ ອົງການຄຸ້ມຄອງວຽກງານສັດນ້ຳ ແລະ ການປະມົງ, ແຕ່ການທ່ອງທ່ຽວ ຕ້ອງບໍ່ສ້າງຜົນກະທົບຕໍ່ ສັດນ້ຳ ແລະ ລະບົບນິເວດ ຂອງວັງສະຫງວນ.

### ມາດຕາ 15 ການໃຫ້ອາຫານສັດນ້ຳໃນວັງສະຫງວນ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສາມາດໃຫ້ອາຫານສັດນ້ຳດັ່ງກ່າວໄດ້ ແຕ່ຕ້ອງນຳໃຊ້ອາຫານທີ່ຖືກຕ້ອງຕາມລະບຽບ ທີ່ ຄະນະກຳມະການຄຸ້ມຄອງວັງສະຫງວນ ກຳນົດ.

### ມາດຕາ 16 ການຄົ້ນຄວ້າທົດລອງ

ບຸກຄົນ, ນິຕິບຸກຄົນ, ນັກສຶກສາ, ນັກຄົ້ນຄວ້າ ທີ່ມີຈຸດປະສົງ ເກັບກຳຂໍ້ມູນ, ເກັບຕົວຢ່າງສັດນ້ຳ ເພື່ອການຄົ້ນຄວ້າທົດລອງທາງດ້ານວິທະຍາສາດ ຢູ່ວັງສະຫງວນ ຕ້ອງໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງວຽກງານສັດນ້ຳ ແລະ ການປະມົງ ແລະ ເຫັນດີຈາກ ຄະນະກຳມະການຄຸ້ມຄອງວັງສະຫງວນ.

### ມາດຕາ 17 ການນຳໃຊ້ວັງສະຫງວນຕາມລະດູການ

ການນຳໃຊ້ວັງສະຫງວນຕາມລະດູການ ຈະສາມາດປະຕິບັດໄດ້ກໍ່ຕໍ່ເມື່ອໄດ້ມີການສ້າງຕັ້ງ, ຄຸ້ມຄອງ ແລະ ປົກປັກຮັກສາວັງສະຫງວນ ທີ່ຕໍ່ເນື່ອງກັນເປັນເວລາ ສາມ ປີ. ກ່ອນການນຳໃຊ້ ຄະນະກຳມະການຄຸ້ມຄອງວັງສະ

ຫງອນ ຕ້ອງກຳນົດກົດລະບຽບ ກ່ຽວກັບ ວິທີການຫາ, ລະດູການ, ຊະນິດ ແລະ ເຄື່ອງມື ສຳລັບການຫາສັດນ້ຳ ພ້ອມທັງປະຕິບັດຕາມລະບຽບການ ທີ່ກຳນົດ.

## ໝວດທີ 4
## ຂໍ້ຫ້າມ

### ມາດຕາ 18 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ເຂົ້າໄປ ຫາ ຫຼື ຈັບ ສັດນ້ຳ, ທຳລາຍແຫຼ່ງທີ່ຢູ່ອາໄສຂອງສັດນ້ຳ ຢູ່ໃນວັງສະຫງວນ;
2. ນຳໃຊ້ເຄື່ອງມື ຫາ ຫຼື ຈັບ ສັດນ້ຳແບບດັບສູນ ເຊັ່ນ: ທາດເບື່ອ, ລະເບີດ, ອາວຸດ, ເຄື່ອງໄຟຟ້າ, ຄົ້ນ, ແສງ, ສຽງ ເພື່ອຫາ ຫຼື ຈັບສັດນ້ຳ ແບບດັບສູນ;
3. ຖິ້ມຂີ້ເຫຍື້ອ, ປ່ອຍນ້ຳເປື້ອນ, ນ້ຳມັນ, ສານເຄມີ ທີ່ເກີດມີມົນລະພິດ ລົງໃນຂອບເຂດວັງສະຫງວນ;
4. ປ່ອຍສັດນ້ຳສາຍພັນຕ່າງປະເທດ ທີ່ມີຄວາມສ່ຽງ ຕໍ່ການທຳລາຍ ປາ ແລະ ສັດນ້ຳ ພັນພື້ນເມືອງ ແລະ ລະບົບນິເວດຂອງວັງສະຫງວນ;
5. ຍ້າຍ, ປ່ຽນແປງ, ທຳລາຍປ້າຍ ຫຼື ຫຼັກໝາຍຂອບເຂດ ຂອງວັງສະຫງວນ;
6. ຕັດຕົ້ນໄມ້ຢູ່ຂອບເຂດບໍລິເວນວັງສະຫງວນ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

### ມາດຕາ 19 ຂໍ້ຫ້າມ ສຳລັບ ພະນັກງານ ແລະ ຄະນະກຳມະການຄຸ້ມຄອງວັງສະຫງວນ

ຫ້າມ ພະນັກງານ ແລະ ຄະນະກຳມະການຄຸ້ມຄອງວັງສະຫງວນ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ກຸ່ມກ້ອນຂອງຕົນ;
2. ທວງເອົາ, ຂໍເອົາ, ຮັບສິນບົນ ຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຕ່າງໆ;
3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເມີນເສີຍ ແລະ ຂາດຄວາມຮັບຜິດຊອບ;
4. ປອມແປງເອກະສານ, ອອກເອກະສານ ຫຼື ທຳລາຍເອກະສານ ໂດຍບໍ່ຖືກຕ້ອງ;
5. ປິດເບືອນຄວາມຈິງ, ປິດບັງ, ເຊື່ອງອຳ ແລະ ປົກປ້ອງ ຫຼື ໃຫ້ຄວາມຮ່ວມມືກັບ ຜູ້ກະທຳຜິດ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ການແບ່ງຄວາມຮັບຜິດຊອບ ກ່ຽວກັບ ວຽກງານຄຸ້ມຄອງວັງສະຫງວນ

### ມາດຕາ 20 ສິດ ແລະ ໜ້າທີ່ຂອງ ກົມລ້ຽງສັດ ແລະ ການປະມົງ

ໃນວຽກງານຄຸ້ມຄອງວັງສະຫງວນ ກົມລ້ຽງສັດ ແລະ ການປະມົງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການ;
2. ຄົ້ນຄວ້າ ຜັນຂະຫຍາຍ ສ້າງ, ປັບປຸງ ນິຕິກຳ ແລະ ລະບຽບການ ກ່ຽວກັບ ສັດນ້ຳ ແລະ ການຄຸ້ມຄອງວັງສະຫງວນ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ທີ່ກ່ຽວຂ້ອງກັບວັງສະຫງວນ;
4. ຊີ້ນຳ, ຊຸກຍູ້ ຂະແໜງລ້ຽງສັດ ແລະ ການປະມົງ ຂັ້ນແຂວງ ສ້າງຕັ້ງ ແລະ ຄຸ້ມຄອງວັງສະຫງວນ ໃນເຂດຄຸ້ມຄອງຂອງຕົນ ໃຫ້ຍືນຍົງ;

5. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງວັງສະຫງວນ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບ ສັດນ້ຳ ແລະ ວັງສະຫງວນ;

6. ປະສານງານກັບ ອົງການປົກຄອງທ້ອງຖິ່ນ ແລະ ອົງການທີ່ກ່ຽວຂ້ອງ ໃນການສ້າງກົນໄກ ພັດທະນາ, ຄຸ້ມຄອງ ແລະ ນຳໃຊ້ ວັງສະຫງວນ ໃຫ້ມີປະສິດທິຜົນ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງວັງສະຫງວນ ໃຫ້ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

### ມາດຕາ 21 ສິດ ແລະ ໜ້າທີ່ ຂອງຂະແໜງລ້ຽງສັດ ແລະ ການປະມົງ ຂັ້ນແຂວງ

ໃນວຽກງານຄຸ້ມຄອງວັງສະຫງວນ ຂະແໜງລ້ຽງສັດ ແລະ ການປະມົງ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ທີ່ກ່ຽວຂ້ອງກັບວັງສະຫງວນ;

2. ຊີ້ນຳ, ຊຸກຍູ້, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ກ່ຽວກັບ ວຽກງານຄຸ້ມຄອງວັງສະຫງວນ ທີ່ຢູ່ໃນການຄຸ້ມຄອງຂອງຕົນ;

3. ເຂົ້າຮ່ວມຂະບວນການ ສ້າງຕັ້ງ, ຄຸ້ມຄອງ ແລະ ນຳໃຊ້ ວັງສະຫງວນ ຂອງ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ;

4. ຊຸກຍູ້ ໃຫ້ປະຊາຊົນ ແລະ ທຸກພາກສ່ວນມີການຮ່ວມມື, ປະກອບສ່ວນ ແລະ ເປັນເຈົ້າການ ໃນການປົກປັກຮັກສາ ແລະ ຄຸ້ມຄອງວັງສະຫງວນ ໃຫ້ຍືນຍົງ;

5. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງວັງສະຫງວນ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບ ສັດນ້ຳ ແລະ ວັງສະຫງວນ;

6. ປະສານງານກັບ ອົງການປົກຄອງທ້ອງຖິ່ນ ແລະ ອົງການທີ່ກ່ຽວຂ້ອງ ໃນການສ້າງກົນໄກ ພັດທະນາ, ຄຸ້ມຄອງ ແລະ ນຳໃຊ້ ວັງສະຫງວນ ໃຫ້ມີປະສິດທິຜົນ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານວັງສະຫງວນ ໃຫ້ ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ ແລະ ກົມລ້ຽງສັດ ແລະ ການປະມົງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

### ມາດຕາ 22 ສິດ ແລະ ໜ້າທີ່ ຂອງໜ່ວຍງານ ລ້ຽງສັດ ແລະ ການປະມົງ ຂັ້ນເມືອງ

ໃນວຽກງານຄຸ້ມຄອງວັງສະຫງວນ ໜ່ວຍງານລ້ຽງສັດ ແລະ ການປະມົງ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ທີ່ກ່ຽວຂ້ອງກັບ ວັງສະຫງວນ;

2. ຊີ້ນຳ, ຊຸກຍູ້, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ຂອງຄະນະກຳມະການຄຸ້ມຄອງວັງສະຫງວນຂອງບ້ານ;

3. ເປັນເຈົ້າການ ສຳຫຼວດ ແລະ ເຂົ້າຮ່ວມຂະບວນການ ສ້າງຕັ້ງ, ຄຸ້ມຄອງ ແລະ ນຳໃຊ້ວັງສະຫງວນຂອງບ້ານ;

4. ຊຸກຍູ້ ໃຫ້ປະຊາຊົນ ແລະ ທຸກພາກສ່ວນ ມີການຮ່ວມມື, ປະກອບສ່ວນ ແລະ ເປັນເຈົ້າການ ໃນການປົກປັກຮັກສາ ແລະ ຄຸ້ມຄອງວັງສະຫງວນ ໃຫ້ຍືນຍົງ;

5. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ວຽກງານຂອງ ຄະນະກຳມະການຄຸ້ມຄອງວັງສະຫງວນ ແລະ ສະກັດກັ້ນ ການລະເມີດ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ;

6. ປະສານງານກັບ ອົງການປົກຄອງທ້ອງຖິ່ນ ແລະ ອົງການທີ່ກ່ຽວຂ້ອງ ໃນການສ້າງກົນໄກພັດທະນາ, ຄຸ້ມຄອງ ແລະ ນຳໃຊ້ ວັງສະຫງວນ ໃຫ້ມີປະສິດທິຜົນ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານວັງສະຫງວນ ໃຫ້ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ຂະແໜງລ້ຽງສັດ ແລະ ການປະມົງ ຂັ້ນແຂວງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 23 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ເປັນຕົ້ນ ປະກອບສ່ວນເຂົ້າໃນການ ສ້າງຕັ້ງ, ຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ ວັງສະຫງວນ ພ້ອມທັງ ສົ່ງເສີມການອະນຸລັກ, ປົກປັກຮັກສາສັດນ້ຳ ໃຫ້ມີຄວາມອຸດົມສົມບູນ ຈະໄດ້ຮັບການຍ້ອງຍໍ ແລະ ຮັບນະໂຍບາຍ ອື່ນໆ ຕາມລະບຽບການ.

### ມາດຕາ 24 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ຕັກເຕືອນ, ປັບໃໝ ແລະ ປະຕິບັດວິໄນ ຕາມກໍລະນີໜັກ ຫຼື ເບົາ.

ສຳລັບການລະເມີດ ລະບຽບການຄຸ້ມຄອງວັງສະຫງວນ ຂອງແຕ່ລະທ້ອງຖິ່ນ ໃຫ້ ຄະນະກຳມະການຄຸ້ມຄອງວັງສະຫງວນນັ້ນ ເປັນຜູ້ກຳນົດລະບຽບການສະເພາະ ຕາມຄວາມເໝາະສົມຂອງແຕ່ລະທ້ອງຖິ່ນ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

### ມາດຕາ 25 ການຈັດຕັ້ງປະຕິບັດ

ມອບໃຫ້ ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໂຄສະນາເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນສູງ.

### ມາດຕາ 26 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 29 ກັນຍາ 2025 ເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ລັດຖະມົນຕີ

ປອ. ລິນຄຳ ດວງສະຫວັນ